# ການສ້າງເຮືອນອຸໂມງເພື່ອ ຂະຫຍາຍລຳມັນຕົ້ນແບບໄວ

## ຄູ່ມືການສ້າງເຮືອນອຸໂມງ



Alliance
Bioversity International
CIAT
International Center for Tropical Agriculture
Since 1967 Science to cultivate change
Australian Centre for International Agricultural Research
Australian Aid
CGIAR
RESEARCH PROGRAM ON Roots, Tubers and Bananas
NAFRI

## ໜ້າເນື້ອຫາ


**ຜະລິດໂດຍ** . . . . . . . . . . . . . . . . . . . . . . . . . . . . 1

**ພາກສະເໜີ** . . . . . . . . . . . . . . . . . . . . . . . . . . . . 2

**ວິທີການຂະຫຍາຍທ່ອນພັນແບບໄວ** . . . . . . . . . . . . . . . . . . 3

**ສັດຕູພືດ ແລະ ພະຍາດຂອງມັນຕົ້ນ** . . . . . . . . . . . . . . . . 4

**ການອອກແບບເຮືອນອຸໂມງ** . . . . . . . . . . . . . . . . . . . . . 5

**ການຄັດເລືອກສະຖານທີ່** . . . . . . . . . . . . . . . . . . . . . . 5

**ການກໍ່ສ້າງເຮືອນອຸໂມງ** . . . . . . . . . . . . . . . . . . . . . 6

ວັດສະດຸຕ່າງໆ . . . . . . . . . . . . . . . . . . . . . . . . . . . . 6
ການກະກຽມພື້ນທີ່ . . . . . . . . . . . . . . . . . . . . . . . . . . 8
ໃຊ້ສາຍຜຽກໝາຍພື້ນທີ່ກໍ່ສ້າງ . . . . . . . . . . . . . . . . . . . . 9
ການວາງດິນບ່ອກ . . . . . . . . . . . . . . . . . . . . . . . . . . . 9
ວັດສະດຸເຮັດໂຕະ . . . . . . . . . . . . . . . . . . . . . . . . . . 10
ການທາສີໄມ້ເພື່ອກັນຄວາມຊື່ນ . . . . . . . . . . . . . . . . . . . 10
ວັດສະດຸສໍາລັບເຮັດສອງໂຕະທາງດ້ານຂ້າງ . . . . . . . . . . . . . . 10
ການສ້າງໂຄງໂຕະປູກ . . . . . . . . . . . . . . . . . . . . . . . . . 11
ການປະກອບໂຕະປູກ . . . . . . . . . . . . . . . . . . . . . . . . . . 12
ການກະກຽມຫີນແຮ່ໃສ່ໂຕະປູກ . . . . . . . . . . . . . . . . . . . . 13
ການໃສ່ຫີນແຮ່ . . . . . . . . . . . . . . . . . . . . . . . . . . . . 14
ປົກອີກຊັ້ນໜຶ່ງດ້ວຍຜ້າກັນຊຶມ . . . . . . . . . . . . . . . . . . . 15
ການໃສ່ດິນຊາຍ . . . . . . . . . . . . . . . . . . . . . . . . . . . 16
ໂຕະປູກທີ່ສໍາເລັດແລ້ວ . . . . . . . . . . . . . . . . . . . . . . . 16
ການສ້າງໂຄງເຮືອນອຸໂມງ . . . . . . . . . . . . . . . . . . . . . . 17
ການສ້າງໂຄງຫຼັງຄາຂອງເຮືອນອຸໂມງ . . . . . . . . . . . . . . . . . 18
ການປະກອບໂຄງຫຼັງຄາເຂົ້າກັນ . . . . . . . . . . . . . . . . . . . . 18
ການເຮັດປະຕູທາງເຂົ້າ . . . . . . . . . . . . . . . . . . . . . . . . 19
ການປົກເຮືອນອຸໂມງດ້ວຍ ຜ້າຢາງ . . . . . . . . . . . . . . . . . . 20
ເຮືອນອຸໂມງທີ່ສ້າງສໍາເລັດ . . . . . . . . . . . . . . . . . . . . . 21
ການຫົດນໍ້າ . . . . . . . . . . . . . . . . . . . . . . . . . . . . . 23
ການຈັດການລະບົບນໍ້າ . . . . . . . . . . . . . . . . . . . . . . . . 23

**ວາງຜັງຂອງເຮືອນອຸໂມງ** . . . . . . . . . . . . . . . . . . . . . 24

ພື້ນເຮືອນອຸໂມງ ແລະ ແຖວດິນບ່ອກ . . . . . . . . . . . . . . . . . 24
ໂຕະດ້ານຂ້າງ ແລະ ໂຕະປູກ . . . . . . . . . . . . . . . . . . . . . 25
ໂຄງຫຼັງຄາເຮືອນອຸໂມງ . . . . . . . . . . . . . . . . . . . . . . . . 26
ໂຄງຫຼັງຄາເຮືອນອຸໂມງ ແລະ ໂຕະດ້ານຂ້າງ . . . . . . . . . . . . . . 27
ໂຕະວາງເບ້ຍມັນຕົ້ນດ້ານຂ້າງ . . . . . . . . . . . . . . . . . . . . 28
ໂຕະປູກ . . . . . . . . . . . . . . . . . . . . . . . . . . . . . . . 29

**ການຈັດການລະບົບເຮືອນອຸໂມງ** . . . . . . . . . . . . . . . . . . 30

**ແຫຼ່ງຂໍ້ມູນວິດີໂອອື່ນໆ** . . . . . . . . . . . . . . . . . . . . . 30

## ຜະລິດໂດຍ

ກວດແກ້: Erik Delaquis

ເນື້ອໃນ: Erik Delaquis, Jonathan C. Newby, ລາວທ່າວ ຢົວະບີ, ສາຍທອງ ອຸດທະຈິດ, Roosevelt Escobar

ລິຂະສິດ: CIAT (2021)

ການຄົ້ນຄວ້ານີ້ໄດ້ຖືກຈັດຕັ້ງປະຕິບັດເປັນສ່ວນໜຶ່ງໃນການສະໜັບສະໜູນທຶນຈາກແຜນງານຄົ້ນຄວ້າກ່ຽວກັບພືດຮາກ,

ພືດຫົວ ແລະ ກ້ວຍ (RTB) ຂອງ CGIAR ແລະ ໄດ້ຮັບການສະໜັບສະໜູນໂດຍຜູ້ຮ່ວມສົມທົບທຶນຂອງ CGIAR (https://www.cgiar.org/funders/). ສຳລັບວຽກງານນີ້ໄດ້ຮັບການສະໜັບສະໜູນດ້ານທຶນຮອນ ຈາກສູນຄົ້ນຄວ້າກະສິກຳສາກົນຂອງອົດສະຕາລີ (ACIAR) ແລະ RTB-CGIAR.

## ພາກສະເໜີ

ປຶ້ມຄູ່ມືນີ້ຈະແນະນຳວິທີການສ້າງເຮືອນອຸໂມງທີ່ໃຊ້ຂະຫຍາຍລຳມັນຕົ້ນແບບໄວ ໂດຍອີງໃສ່ປະສົບການຂອງສູນຄົ້ນຄວ້າກະສິກຳເຂດຮ້ອນສາກົນ (CIAT) ທີ່ມີສຳນັກງານຢູ່ປະເທດໂຄລຳເບຍ ແລະ ສ ປປ ລາວ. ເຮືອນອຸໂມງເຫຼົ່ານີ້ໄດ້ຖືກພັດທະນາ ໂດຍສູນຄົ້ນຄວ້າກະສິກຳເຂດຮ້ອນສາກົນ ແລະ ໄດ້ທົດສອບການນຳໃຊ້ຢູ່ທະວີບອາເມລິກາໃຕ້ ແລະ ອາຊີ, ເຊິ່ງພິສູດໃຫ້ເຫັນວ່າເປັນທາງອອກທີ່ສາມາດປະຕິບັດໄດ້ຈິງ ສຳລັບການຜະລິດລຳມັນຕົ້ນແບບໄວ.

ຄູ່ມືສະບັບນີ້ຈະອະທິບາຍວ່າເຮືອນອຸໂມງສາມາດເຮັດຫຍັງໄດ້ ແລະ ເປັນຫຍັງມັນຈຶ່ງມີຄວາມາສຳຄັນຫຼາຍ. ນອກຈາກນັ້ນຍັງໃຫ້ຄຳແນະນຳຂັ້ນຕອນການກໍ່ສ້າງເຮືອນອຸໂມງໄປເປັນແຕ່ລະບາດກ້າວ ພ້ອມຮູບພາບ ແລະ ວິດີໂອການກໍ່ສ້າງເຮືອນອຸໂມງ ເພື່ອໃຫ້ທ່ານສາມາດເອົາໄປນຳໃຊ້ການສ້າງເຮືອນອຸໂມງໄດ້ດ້ວຍຕົນເອງ. ປຶ້ມຄູ່ມືສະບັບນີ້ຍັງໃຫ້ຄຳແນະນຳໃນການຈັດການເຮືອນອຸໂມງເພື່ອຜະລິດທ່ອນພັນຢ່າງມີປະສິດຕິພາບ.









## ວິທີການຂະຫຍາຍທ່ອນພັນແບບໄວ

ການໃຊ້ເຮືອນອຸໂມງຂະຫຍາຍທ່ອນພັນມັນຕົ້ນມີ 3 ເຫດຜົນຫຼັກໆດັ່ງຕໍ່ໄປນີ້:

1) ເພື່ອຜະລິດທ່ອນພັນທີ່ຈະໃຊ້ປູກໃນຈຳນວນຫຼາຍໄດ້ຢ່າງສະໝ່ຳສະເໝີ, 2) ເພື່ອຂະຫຍາຍພັນໃໝ່ໄດ້ຢ່າງໄວວາ, 3) ເພື່ອສະໜັບສະໜູນໂຄງການຍັ້ງຢືນການປັບປຸງພັນ ຫຼື ແນວພັນ. ການຂະຫຍາຍລຳຕົ້ນແບບດັ້ງເດີມແມ່ນການ ເກັບເອົາລຳຕົ້ນແກ່ຈາກຕົ້ນມັນຕົ້ນ, ເອົາໄປເກັບຮັກສາໄວ້ຈົນຮອດຕົ້ນລະດູຝົນ, ຈຶ່ງຕັດທ່ອນພັນໃຫ້ມີຄວາມຍາວປະມານ 15 ຊມ ປູກລົງໄປໃນແປງ, ແລະ ຕ້ອງໄດ້ລໍຖ້າ 8–12 ເດືອນຈຶ່ງຈະໄດ້ເກັບກູ້. ນັ້ນໝາຍຄວາມວ່າຕ້ອງໄດ້ໃຊ້ເວລາ 1 ປີຕໍ່ການຂະຫຍາຍພັນໜຶ່ງຮອບວຽນ. ແນວພັນທີ່ແຕກຕ່າງກັນໄດ້ຈຳນວນລຳຕົ້ນແຕກຕ່າງກັນ, ໃນອາຊີ, ປົກກະຕິແມ່ນໄດ້ 1–3 ລຳ/ຕົ້ນ. ນອກນັ້ນຍັງຂຶ້ນກັບປັດໄຈອື່ນໆອີກເຊັ່ນ: ຄວາມສູງ ແລະ ທາດອາຫານໃນລຳຕົ້ນ ແລະ ຄວາມຖີ່ຂອງຕາ. ປົກກະຕິແລ້ວຈະໄດ້ທ່ອນພັນທີ່ດີ 5 ທ່ອນຕໍ່ລຳຕົ້ນເທົ່ານັ້ນ. ດັ່ງນັ້ນໝາຍຄວາມວ່າໃນໜຶ່ງປີອັດຕາການຂະຫຍາຍພັນມັນຕົ້ນໃນລະບົບດັ້ງເດີມອາດຈະໄດ້ປະມານ 1:10 ເທົ່ານັ້ນ.

ການຂະຫຍາຍລຳມັນຕົ້ນໃນເຮືອນອຸໂມງ ສາມາດເລັ່ງຂະບວນການ ແລະ ເພີ່ມຈຳນວນນໄດ້ຢ່າງຫຼວງຫຼາຍ. ເຊິ່ງຂະບວນການດັ່ງກ່າວສາມາດເຮັດໄດ້ຫຼາຍວິທີ. ວິທີທຳອິດ, ການປູກຕົ້ນມັນຕົ້ນຢູ່ໃນເຮືອນອຸໂມງແມ່ນໃຊ້ທ່ອນພັນທີ່ສັ້ນກວ່າປູກໃນແປງປູກທົ່ວໄປ, ສະນັ້ນສາມາດຕັດໄດ້ຫຼາຍທ່ອນຈາກລຳຕົ້ນດຽວ. ນອກຈາກນັ້ນ, ລະບົບເຮືອນອຸໂມງຍັງສາມາດໃຊ້ພາກສ່ວນອ່ອນ ແລະ ຍັງຂຽວຂອງລຳຕົ້ນທີ່ຖືກໂຍນຖິ້ມຕາມວິທີການດັ້ງເດີມ. ທ່ອນພັນທີ່ຕັດສັ້ນນັ້ນແມ່ນໄດ້ປູກຕາມລວງນອນເຮັດໃຫ້ທຸກຕາອອກໜໍ່ທັງໝົດ. ດັ່ງນັ້ນແທນທີ່ຈະໄດ້ອັດຕາສ່ວນ 1:10, ແຕ່ສາມາດບັນລຸໃນອັດຕາສ່ວນການຂະຫຍາຍສູງເທົ່າກັບ 1:40 ຫຼື 1:60. ອັນທີ່ສອງ, ການຕັດແຍກລຳຕົ້ນໃນເຮືອນອຸໂມງ, ສາມາດເຮັດໃຫ້ໄລຍະເວລາຂອງຮອບວຽນໃນການຂະຫຍາຍລຳມັນສັ້ນລົງ. ແທນທີ່ຈະເປັນໜຶ່ງຮອບວຽນຕໍ່ປີດ້ວຍລະບົບດັ້ງເດີມ, ໃນເຮືອນອຸໂມງສາມາດບັນລຸ5–6 ຮອບວຽນໃນປີດຽວ.

ຄວາມແຕກຕ່າງ 2 ວິທີນີ້ ເປັນປັດໄຈສຳຄັນໃນການເຮັດໃຫ້ເຮືອນອຸໂມງຜະລິດໄດ້ສູງກວ່າວິທີການຜະລິດແບບດັ້ງເດີມ. ນອກຈາກນັ້ນເຮືອນອຸໂມງກໍເປັນສະພາບແວດລ້ອມທີ່ປິດ, ເຮັດໃຫ້ສາມາດຄວບຄຸມສັດຕູພືດ ແລະ ພະຍາດຕ່າງໆໃນລະຫວ່າງການຂະຫຍາຍທ່ອນພັນໄດ້ດ້ວຍ.

## ສັດຕູພືດ ແລະ ພະຍາດຂອງມັນຕົ້ນ

ໜຶ່ງໃນຂໍ້ດີຂອງການໃຊ້ເຮືອນອຸໂມງແມ່ນການຫຼຸດຜ່ອນການຕິດເຊື້ອພະຍາດ ແລະ ສັດຕູພືດຕ່າງໆ ເພື່ອຜະລິດລຳມັນຕົ້ນທີ່ປອດເຊື້ອ. ເຊິ່ງເປັນສິ່ງສຳຄັນເພາະວ່າພະຍາດຂອງມັນຕົ້ນເປັນອັນຕະລາຍຫຼາຍເຊັ່ນ: ພະຍາດຟອຍຂົນໄກ່ (CWB) ແລະ ພະຍາດໃບດ່າງ (CMD) ແມ່ນເກີດມາຈາກເຊື້ອພະຍາດທີ່ອາໄສຢູ່ພາຍໃນລຳຕົ້ນ ແລະ ສາມາດແຜ່ລາມຜ່ານລຳມັນຕົ້ນທີ່ຕິດເຊື້ອ. ພະຍາດທັງ 2 ຊະນິດນີ້ແມ່ນຍັງແຜ່ລາມຜ່ານການກັດຕົ້ນມັນຂອງແມງໄມ້ທີ່ມີຂະໜາດນ້ອຍໆຫຼາຍຊະນິດ. ພະຍາດໃບດ່າງ ແລະ ພະຍາດຟອຍຂົນໄກ່ໃນມັນຕົ້ນເປັນພະຍາດທີ່ຮ້າຍແຮງຢູ່ໃນອາຊີ, ເຮັດໃຫ້ຊາວກະສິກອນເສຍຜົນຜະລິດຢ່າງຫຼວງຫຼາຍ, ເນື່ອງຈາກວ່າພະຍາດທັງສອງຊະນິດນີ້ຍັງບໍ່ມີວິທີການຮັກສາໄດ້. ສະນັ້ນການຜະລິດລຳມັນທີ່ປອດເຊື້ອຈຶ່ງເປັນວິທີທີ່ສຳຄັນຫຼາຍ ເພື່ອຕໍ່ສູ້ກັບການແຜ່ລະບາດຂອງພະຍາດດັ່ງກ່າວ.

ການຂະຫຍາຍລຳມັນໃນເຮືອນອຸໂມງຈະຊ່ວຍໃຫ້ທ່ານສາມາດຮັບປະກັນວ່າລຳມັນຕົ້ນປອດເຊື້ອພະຍາດ ໂດຍການຄວບຄຸມແຕ່ເລີ່ມຕົ້ນເອົາທ່ອນພັນເຂົ້າໄປໃນເຮືອນອຸໂມງ, ການປ້ອງກັນແມງໄມ້ໃນເວລາການຂະຫຍາຍ ແລະ ຕິດຕາມການຈະເລີນເຕີບໂຕຂອງເບ້ຍມັນຕົ້ນຢ່າງໃກ້ຊິດຕະຫຼອດຂະບວນການຂະຫຍາຍລຳມັນ.



**ລັກສະນະຂອງມັນຕົ້ນທີ່ຕິດເຊື້ອພະຍາດໃບດ່າງ**



**ລັກສະນະຂອງມັນຕົ້ນທີ່ຕິດເຊື້ອພະຍາດຟອຍຂົນໄກ່**



## ການອອກແບບເຮືອນອຸໂມງ

ເຮືອນອຸໂມງມີຂະໜາດໃຫຍ່ພໍສຳລັບຜູ້ໃຫຍ່ຢືນຢູ່ພາຍໃນໄດ້ ແລະ ໄດ້ຖືກອອກແບບໃຫ້ສ້າງຂຶ້ນດ້ວຍວັດສະດຸທີ່ຫາງ່າຍຢູ່ໃນບັນດາຮ້ານສະໜອງອຸປະກອນ ແລະ ເຄື່ອງກະສິກຳ. ທາງທີ່ດີທີ່ສຸດຄວນຮັກສາເຮືອນອຸໂມງທີ່ມີຂະໜາດດຽວກັນກັບແບບໃນປື້ມຄູ່ມືສະບັບນີ້. ຖ້າທ່ານຕ້ອງການຜະລິດເບ້ຍມັນຕົ້ນຈຳນວນຫຼາຍກໍໃຫ້ສ້າງເຮືອນອຸໂມງເພີ່ມໃຫ້ໄດ້ຫຼາຍຫຼັງ ບໍ່ຄວນສ້າງເຮືອນອຸໂມງໃຫ້ມີຂະໜາດໃຫຍ່ຂຶ້ນ. ອັນນີ້ກໍເພື່ອເຮັດໃຫ້ງ່າຍຕໍ່ການຄຸ້ມຄອງ, ມີຄວາມຍືດຍຸ່ນ ແລະ ມີປະສິດທິພາບຫຼາຍຂຶ້ນໃນການຮັບມືກັບການລະບາດຂອງສັດຕູພືດ ຫຼື ພະຍາດຕ່າງໆ.

## ການຄັດເລືອກສະຖານທີ່

ສິ່ງທຳອິດທີ່ຕ້ອງໄດ້ພິຈາລະນາເມື່ອສ້າງເຮືອນອຸໂມງແມ່ນທີ່ຕັ້ງ ແລະ ຕ້ອງມີລະບົບນ້ຳເພື່ອຫົດນ້ຳຢູ່ໃນໂຕະປູກ ແລະ ຕົ້ນອ່ອນ, ສະນັ້ນຕ້ອງມີແຫຼ່ງນ້ຳຢູ່ໃກ້. ຖ້າທ່ານຈະໃຊ້ເຄື່ອງພົ່ນ ຫຼື ພັດລົມອັດຕະໂນມັດ, ທ່ານຈະຕ້ອງແນ່ ໃຈວ່າມີແຫຼ່ງໄຟຟ້າທີ່ຈະສະໜອງພຽງພໍຕໍ່ຄວາມຕ້ອງການ.

ເນື່ອງຈາກລຳມັນຕົ້ນໃຫຍ່ ແລະ ມີນ້ຳໜັກຫຼາຍໃນການຂົນສົ່ງຫຼຽບໃສ່ກັບເມັດເຂົ້າ ຫຼື ສາລີ, ສະນັ້ນສະຖານທີ່ຕັ້ງ ເຮືອນອຸໂມງຄວນຢູ່ໃກ້ກັບບ່ອນທີ່ທ່ານຈະປູກ ຫຼື ຂາຍລຳມັນຕົ້ນ. ເຖິງຢ່າງກໍຕາມ, ສະຖານທີ່ກໍຄວນຢູ່ໄກຈາກບ່ອນ ປູກມັນຕົ້ນເພື່ອຫຼຸດຜ່ອນຄວາມສ່ຽງຈາກແມງມີ່ຂາວ ແລະ ແມງໄມ້ຊະນິດອື່ນໆທີ່ສາມາດນຳເຊື້ອພະຍາດເຂົ້າມາໄດ້. ຄຳແນະນຳທົ່ວໄປ, ການສ້າງເຮືອນອຸໂມງເພື່ອຜະລິດລຳມັນຕົ້ນແມ່ນຄວນຮັກສາໃຫ້ຫ່າງຈາກພື້ນທີ່ການຜະລິດມັນ ຕົ້ນທີ່ມີພະຍາດ 10-15 ກິໂລແມັດ. ເຊິ່ງບາງຄັ້ງການເລືອກສະຖານທີ່ກໍບໍ່ສາມາດປະຕິບັດໄດ້ ຫຼື ເປັນໄປໄດ້ ແຕ່ສິ່ງທີ່ສຳຄັນແມ່ນຕ້ອງຮູ້ເຖິງບັນຫາ ແລະ ຈື່ຄຳແນະນຳນີ້ໄວ້ເມື່ອເລືອກສະຖານທີ່. ຖ້າເປັນໄປໄດ້ໃຫ້ສ້າງເຮືອນອຸໂມງຢູ່ພື້ນທີ່ດິນປູກພືດຊະນິດອື່ນໆ ຫຼື ທີ່ດິນທີ່ບໍ່ໄດ້ປູກມັນຕົ້ນ.

# ການກໍ່ສ້າງເຮືອນອຸໂມງ

## ວັດສະດຸຕ່າງ

ນີ້ແມ່ນລາຍການວັດສະດຸທັງໝົດທີ່ທ່ານຕ້ອງການ ລາຍລະອຽດຂອງວັດສະດຸໄດ້ລະບຸໃນຕອນທ້າຍຂອງເອກະສານ. ຖ້າມີວັດສະດຸບາງຊະນິດທີ່ທ່ານບໍ່ສາມາດຫາໄດ້ໃນພື້ນທີ່ ທ່ານສາມາດໃຊ້ວັດສະດຸອື່ນທີ່ທ່ານຫາໄດ້ມາທົດແທນ.



ດິນຊາຍແມ່ນ້ຳທີ່ສະອາດ X $3m^3$



ຫີນແຮ່ X $9m^3$



ກ້ອນດິນບ່ອກໃຫຍ່ X 100



ໄມ້ແປ້ນຂະໜາດ 70 CM / 25 CM



ໄມ້ຂະໜາດ 5 CM / 10 CM + 4 CM / 8 CM




ສີນ້ຳມັນ 5 ລິດ ແລະ ທິນເນີ



ຕະປູກຽວຂະໜາດ 5 CM X 2 ກັບ



ໂຄງປະຕູອາລູມີນຽມ



ເຫຼັກກົມຂະໜາດ 2 CM Ø



ຜ້າຢາງທຳມະດາ (ກ້ວາງ 2 m ໃຊ້ 20 m ສຳລັບໂຕະປູກ ແລະ 25 m ສຳລັບໂຕະທາງດ້ານຂ້າງ)



ຕາໜ່າງຜ້າຂະໜາດ 50 = 0.27 x 0.79 mm X 5 M2




ຜ້າຢາງເຮືອນຮົ່ມ ທີ່ກັນແສງ UV ຍາວ 15 m ກ້ວາງປະມານ 8–10 m ຄວາມໜາ 6 mm



ທໍ່ PVC ຂະໜາດ 2 CM Ø, 30 X 6 M + 2.5 CM Ø, 45 X 6 M



ຂໍຕໍ່ຊື່ PVC ຂະໜາດ 2 CM Ø X 50 + 2.5 CM Ø X 50



ຂໍຕໍ່ 3 ຕາ PVC ຂະໜາດ 2 CM Ø X 50



ຂໍຕໍ່ງໍ PVC ຂະໜາດ 2 CM Ø X 50



ສາຍເຄເບີໄທຂະໜາດ 25 CM X 100



ທໍ່ນ້ຳຂະໜາດ 9 m x 3 ກັບຝາປິດທໍ່ ແລະ ຫົວສີດນ້ຳຈຳນວນ 50

## ການກະກຽມພື້ນທີ່

ພື້ນທີ່ທີ່ໃຊ້ສຳລັບການສ້າງເຮືອນອຸໂມງຄວນເປັນບ່ອນທີ່ຮາບພຽງດີ ແລະ ຕ້ອງໄດ້ເອົາກ້ອນຫີນໃຫຍ່, ງ່າໄມ້ ແລະ ສິ່ງກີດຂວາງອື່ນໆອອກໄປໃຫ້ໝົດ ເພື່ອໃຫ້ຂອບທັງໝົດຂອງເຮືອນອຸໂມງແນບຕິດກັບໜ້າດິນໄດ້ດີ. ນອກຈາກນັ້ນ ຄວນເອົາວັດສະພືດ ແລະ ຫຍ້າອອກຈາກພື້ນທີ່ໄປໃຫ້ໝົດຄືກັນ.



ເລືອກພື້ນທີ່ບ່ອນທີ່ຈະບໍ່ຖືກນ້ຳຖ້ວມໃນຊ່ວງເວລາທີ່ມີຝົນຕົກໜັກ. ເຮືອນອຸໂມງຖືກອອກແບບມາໃຫ້ຖືກຮັບແສງແດດ ໄດ້ເຕັມທີ ແລະ ບໍ່ຈຳເປັນຕ້ອງສ້າງເຮືອນອຸໂມງຢູ່ບ່ອນຮົ່ມ. ໃຫ້ພິຈາລະນາຄວາມສ່ຽງ ແລະ ໄພອັນຕະລາຍອື່ນໆ ທີ່ອາດຈະເກີດຂຶ້ນກັບເຮືອນອຸໂມງເຊັ່ນ: ມີງ່າໄມ້ໃຫຍ່ຈະຕົກລົງໃສ່ເຮືອນອຸໂມງ ຫຼື ມີຄວາມສ່ຽງທີ່ຈະເກີດດິນ ເຈື່ອນ? ເຮືອນອຸໂມງຕັ້ງຢູ່ໃນພື້ນທີ່ທີ່ປອດໄພບໍ ຫຼືມີການຮັກສາສາຄວາມປອດໄພຈາກໂຈນ, ສັດຫຼື ເດັກນ້ອຍທີ່ຈະເຂົ້າໄປໃນສະຖານທີ່ບໍ? ກ່ອນເລີ່ມການກໍ່ສ້າງຕ້ອງແນ່ໃຈວ່າທ່ານພໍໃຈກັບທີ່ຕັ້ງ ແລະ ກະກຽມພື້ນທີ່ໃຫ້ໄດ້ດີ.



ການກຽມພື້ນທີ່ແມ່ນເລີ່ມຕົ້ນໂດຍການປັບພື້ນທີ່ໃຫ້ຮາບພຽງ, ອະນາໄມພື້ນທີ່ ແລະ ໃຊ້ຫີນແຮ່ປັບໜ້າດິນ ຢ່າງໜ້ອຍໃຫ້ໄດ້ເກີນ 1 ແມັດ ຈາກຟື້ນຂອບຂອງເຮືອນອຸໂມງ ເພື່ອຮັກສາພື້ນທີ່ໃຫ້ສະອາດ, ບໍ່ມີຂີ້ຕົມ ແລະ ສິ່ງ ປົນເປື້ອນອື່ນໆ.



## ໃຊ້ສາຍຢຽກໝາຍພື້ນທີ່ກໍ່ສ້າງ

ການແທກຂະໜາດຂອງເຮືອນອຸໂມງ, ວິທີການແທກແມ່ນໃຊ້ທ່ອນໄມ້ນ້ອຍໆ ແລະ ສາຍຢຽກໝາຍພື້ນທີ່ ມັນຈະ ຊ່ວຍໃຫ້ໄດ້ພື້ນທີ່ຊື່ ແລະ ມີຂະໜາດໃຫຍ່ພໍດີກັບເຮືອນອຸໂມງ. ທ່ານສາມາດເຮັດເຄື່ອງໝາຍ ຫຼື ມັດເຊືອກໝາຍໄວ້ ເພື່ອວັດແທກໄລຍະຫ່າງທີ່ຈະວາງກ້ອນດິນບ໋ອກ.



## ການວາງດິນບ໋ອກ

ການວາງກ້ອນດິນບ໋ອກຕ້ອງໄດ້ວາງໃຫ້ເປັນ 6 ແຖວ ເພື່ອສ້າງເປັນສາມໂຕະ: ສອງໂຕະທາງດ້ານຂ້າງ ແລະ ໂຕະໜຶ່ງສໍາລັບປູກຢູ່ເຄິ່ງກາງ. ເຊິ່ງໂຕະຢູ່ເຄິ່ງກາງຈະສັ້ນກ່ວາເພື່ອໃຫ້ມີຊ່ອງຫວ່າງສໍາລັບທາງເຂົ້າອອກບ່ອນປະຕູ.





## ວັດສະດຸເຮັດໂຕະ

ໂຕະປູກສາມາດເຮັດໄດ້ຈາກວັດສະດຸທີ່ແຕກຕ່າງກັນເຊັ່ນ: ໄມ້, ໄມ້ໄຜ່, ຫຼື ແຜ່ນຢາງ. ແຕ່ສິ່ງທີ່ສໍາຄັນແມ່ນວັດສະ ດຸຕ້ອງແຂງທົນທານ, ຮາບພຽງ ແລະ ສາມາດທົນຕໍ່ນໍ້າໜັກຂອງຫີນແຮ່, ດິນຊາຍ ແລະ ນໍ້າ ພ້ອມທັງຄວາມຊື່ນ ແລະ ອຸນຫະພູມທີ່ສູງຢູ່ໃນເຮືອນອຸໂມງ.




## ການທາສີໄມ້ເພື່ອກັນຄວາມຊື່ນ

ເພື່ອໃຫ້ໄມ້ແປ້ນຂອງໂຕະທົນທານຕໍ່ກັບຄວາມຊື່ນສູງ, ໄມ້ແປ້ນຕ້ອງໄດ້ທາສີ ເຊິ່ງຈະຊ່ວຍປ້ອງກັນບໍ່ໃຫ້ໄມ້ເນົ່າເປື່ອຍ ຫຼື ປ້ອງກັນປວກ ແລະ ແມງໄມ້ກິນ. ຄວນໃຊ້ສີນໍ້າມັນທີ່ທົນທານຕໍ່ຄວາມຮ້ອນ ປະສົມກັບນໍ້າມັນ ຕາມຄໍາແນະນໍາທີ່ຢູ່ດ້ານຂ້າງຂອງກະປອງສີ.



## ວັດສະດຸສໍາລັບເຮັດສອງໂຕະທາງດ້ານຂ້າງ

ໄມ້ແປ້ນທີ່ໃຊ້ເຮັດສອງໂຕະທາງຂ້າງຈະຖືກນໍ້າຕະຫຼອດ ເພື່ອໃຫ້ໄມ້ແປ້ນມີຄວາມທົນທານ ຕ້ອງຫໍ່ໄມ້ແປ້ນດ້ວຍຜ້າຢາງ.



ນຳເອົາໄມ້ແປ້ນມາຫໍ່ດ້ວຍຜ້າຢາງ ແລະ ທັດໃຫ້ແໜ້ນໂດຍໃຊ້ກະລັບເຟີຍິງໃສ່.



ນີ້ແມ່ນໂຕະດ້ານຂ້າງທີ່ໃຊ້ໄມ້ແປ້ນຫໍ່ດ້ວຍຜ້າຢາງປູ. ໄມ້ແປ້ນຈະວາງຢູ່ເທິງທ່ອນໄມ້ນ້ອຍໆຂອງແຖວກ້ອນດິນບ໋ອກ. ໂຕະເຫຼົ່ານີ້ຈະແຂງແຮງທົນທານ, ແຫ້ງ  ແລະ ປ້ອງກັນຈາກປວກ ແລະ ຈະໃຊ້ໄດ້ດົນ.



## ການສ້າງໂຄງໂຕະປູກ

ໂຕະປູກຕັ້ງຢູ່ເຄິ່ງກາງຈະເປັນບ່ອນໃສ່ຂີ້ຊາຍ, ຫີນ ແລະ ນ້ຳ ເພື່ອໃຫ້ທ່ອນພັນມັນຕົ້ນແຕກໜໍ່ອອກ, ສະນັ້ນໂຕະປູກຕ້ອງສ້າງໃຫ້ແໜ້ນໜາ ແລະ ເລີກພໍ. ໂຄງໂຕະປູກຈະເຮັດດ້ວຍໄມ້ທີ່ທາສີນ້ຳມັນ ແລະ ຕອກຕະປູຕິດກັນຢ່າງໜາແໜ້ນ.



## ການປະກອບໂຕະປູກ

**ໝາຍເຫດ:** ໂຕະປູກແມ່ນຕ້ອງໄດ້ຈີ່ງບ່ອນໃຫ້ນ້ຳໄຫຼອອກຢູ່ສົ້ນໜຶ່ງຂອງມັນ ໂດຍໃຫ້ມີຮູລະບາຍນ້ຳ ເພື່ອໃຫ້ນ້ຳໄຫຼອອກໄດ້. ສິ່ງສຳຄັນເມື່ອຕິດຕັ້ງດິນບ່ອກ ເພື່ອວາງໂຕະປູກຕ້ອງໄດ້ຈັດລະດັບ **ເຮັດໃຫ້ສົ້ນໜຶ່ງຂອງໂຕະປູກສູງກວ່າອີກສົ້ນໜຶ່ງ 10 ຊັງຕີແມັດ** ໂດຍການເອົາຫີນແຮ່ ແລະ ດິນບາງສ່ວນທີ່ຢູ່ໃຕ້ພື້ນອອກ ຫຼື ເພີ່ມເຂົ້າຕື່ມ. ຖ້າບໍ່ເຮັດແນວນີ້ ຈະເຮັດໃຫ້ມີນ້ຳຂັງ ແລະ ບໍ່ສາມາດລະບາຍນ້ຳໄດ້ ເຊິ່ງຈະເຮັດໃຫ້ເກີດມີເຊື້ອແບັກທີເຣັຍ ແລະ ເຊື້ອເຫັດເຊື້ອລາ ທີ່ສາມາດເຮັດໃຫ້ຕົ້ນມັນເນົ່າເປື່ອຍໄດ້.







ໃຊ້ໄມ້ແປ້ນທີ່ຫໍ່ດ້ວຍຜ້າຢາງເຮັດເປັນໂຕະຈະເຮັດໃຫ້ໂຄງສ້າງມີຄວາມໝັ້ນຄົງແຂງແກ່ນ, ທົນທານ ແລະ ປ້ອງກັນປອກໄດ້.



ປັບໜ້າດິນ ແລະ ຫີນແຮ່ເພື່ອຕັ້ງດິນບ໋ອກໃຫ້ໄດ້ຢ່າງຖືກຕ້ອງ ຈຶ່ງວາງໂຕະປູກໃສ່ເທິງດິນບ໋ອກ. ຢູ່ໃນຮູບຕໍ່ໄປນີ້ ແຖວດິນບ໋ອກຕ້ອງໄດ້ຍ້າຍໄປທາງຂວາເລັກນ້ອຍ.





## ການກະກຽມຫີນແຮ່ໃສ່ໂຕະປູກ

ໂຕະປູກຕ້ອງໄດ້ປົກດ້ວຍຜ້າຢາງ ແລະ ຜ້າກັນຊຶມອີກຊັ້ນໜຶ່ງ, ເພື່ອໃຫ້ເກັບກັກນ້ຳໄດ້ດີຄືກັບອ່າງນ້ຳ. ຄວນໃຊ້ຜ້າຢາງແຜນດຽວທີ່ບໍ່ມີຮອຍຂາດ ແລະ ບໍ່ມີຮູ. ທ່ານສາມາດໃຊ້ຜ້າຢາງເຮືອນຮົ່ມ ຫຼື ຜ້າຢາງປະເພດ ອື່ນທີ່ທົນທານປ້ອງກັນນ້ຳໄດ້.







## ການໃສ່ຫີນແຮ່

ກ່ອນທີ່ຈະໃສ່ຫີນແຮ່ລົງໃສ່ໂຕະປູກ ຄວນລ້າງຫີນແຮ່ດ້ວຍນ້ຳເພື່ອກຳຈັດ ສິ່ງສົກກະປົກອອກ. ຄ່ອຍຖອກ ແລະ ຕື່ມຫີນໃສ່ໂຕະ. ຊ່ອງຫວ່າງລະຫວ່າງ ຫີນແຮ່ຈະຊ່ວຍໃຫ້ນ້ຳລະບາຍອອກ ແລະ ຕົ້ນມັນຈະບໍ່ຖືກນ້ຳຂັງຫຼາຍ. ຄ່ອຍໆ ຕື່ມຫີນແຮ່ເທື່ອລະໜ້ອຍ ແລະ ລະວັງບໍ່ໃຫ້ຜ້າຢາງຖືກພັບ ຫຼື ຂາດ. ຕື່ມຫີນໃຫ້ໄດ້ເຄິ່ງໜຶ່ງຂອງໂຕະປູກ.







## ປົກອີກຊັ້ນໜຶ່ງດ້ວຍຜ້າກັນຊຶມ

ກວດເບິ່ງວ່າຫີນແຮ່ທີ່ຕື່ມໃສ່ກະຈາຍສະໝ່ຳສະເໝີ ແລະ ໄດ້ລະດັບທີ່ຕ້ອງການແລ້ວ ຫຼື ຍັງ, ຈາກນັ້ນໃຫ້ວາງແຜ່ນຜ້າຢູ່ເທິງຫີນແຮ່. ແຜ່ນຜ້າທີ່ໃຊ້ຄວນເປັນຜ້າກັນຊຶມທີ່ນຳໃຊ້ທົ່ວໄປໃນການກໍ່ສ້າງເສັ້ນທາງ ແລະ ຈະເຮັດໃຫ້ນ້ຳໄຫຼ ຜ່ານໄດ້ ແຕ່ຈະປ້ອງກັນບໍ່ໃຫ້ດິນຊາຍຕົກລົງສູ່ຊ່ອງຫວ່າງລະຫວ່າງຫີນແຮ່ ມັນຈະເຮັດໃຫ້ຊັ້ນເທິງຂອງດິນຊາຍລະ ບາຍນ້ຳໄດ້ດີ. ສີຂອງຜ້າມີຫຼາຍສີ, ແຕ່ຜູ້ຜະລິດມັກໃຊ້ສີເພື່ອແຍກປະເພດຂອງຜ້າທີ່ແຕກຕ່າງກັນ. ນຳໃຊ້ຜ້າສີໃດກໍໄດ້ ຜ້າທີ່ມີໃນຮູບແມ່ນຜ້າສີຂຽວ, ສີເທົາ ແລະ ສີຂາວ.





## ການໃສ່ດິນຊາຍ

ໃຫ້ໃສ່ດິນຊາຍທີ່ສະອາດໃຫ້ເຕັມໂຕະປູກ ແລະ ໃຫ້ກະຈາຍອອກສະໝໍ່າສະເໝີໃຫ້ເທົ່າກັນແຕ່ລະດ້ານ ແລະ ດ້ານແຈຂອງໂຕະປູກ ແຕ່ບໍ່ຈໍາເປັນຕ້ອງເຮັດໃຫ້ແໜ້ນ ເມື່ອເວລາຜ່ານໄປມັນຈະແໜ້ນເອງ. ທ່ານສາມາດເພີ່ມດິນຊາຍໃນ ພາຍຫຼັງ ຖ້າຈໍາເປັນ. ຈາກນັ້ນປັບດິນຊາຍອອກໃຫ້ໜ້າໂຕະຮາບພຽງດີ.



## ໂຕະປູກທີ່ສໍາເລັດແລ້ວ

ຫຼັງຈາກສໍາເລັດແລ້ວ ເຮົາຈະໄດ້ໂຕະປູກທີ່ແຂງແກ່ນທົນທານ ທີ່ປະກອບດ້ວຍຊັ້ນຂອງຜ້າຢາງ, ຊັ້ນຂອງຫີນແຮ່, ຊັ້ນຂອງຜ້າກັນຊຶມ ແລະ ຊັ້ນຂອງດິນຊາຍເຊິ່ງເໝາະສໍາລັບການແຕກໜໍ່ຂອງທ່ອນພັນມັນຕົ້ນ. ຂັ້ນຕອນຕໍ່ໄປແມ່ນການສ້າງໂຄງດ້ານນອກ.





## ການສ້າງໂຄງເຮືອນອຸໂມງ

ການສ້າງໂຄງເຮືອນອຸໂມງ ບາດກ້າວທຳອິດແມ່ນການສ້າງພື້ນຖານ ໂດຍການໃຊ້ເຫຼັກກົມຕອກລົງພື້ນດິນໃຫ້ມີຄວາມແຂງແກ່ນ. ໂດຍການໃຊ້ຄ້ອນໄມ້ຕອກເຫຼັກກົມລົງໄປໃນດິນໃຫ້ມັນເລິກປະມານ 50 ຊມ, ສ່ວນສົ້ນດ້ານເທິງຂອງເຫຼັກກົມແມ່ນປະໄວ້ຕໍ່ກັບທໍ່ PVC ເພື່ອໃຫ້ໂຄງເຮືອນອຸໂມງມີຄວາມທົນທານ ແລະ ເປັນຊົງໂຄ້ງ.





## ການສ້າງໂຄງຫຼັງຄາຂອງເຮືອນອຸໂມງ



ໂຄງຫຼັງຄາແມ່ນສ້າງດ້ວຍທໍ່ PVC ໂດຍທົ່ວໄປທໍ່ PVC ມີ 2 ຊະນິດທີ່ຂາຍຢູ່ໃນຮ້ານຂາຍອຸປະກອນກໍ່ສ້າງ ຄື: ປະເພດສີເຫຼືອງ ເຊິ່ງເປັນທໍ່ໄຟຟ້າ ແລະ ມີຄວາມຍືດຍຸ່ນກວ່າ ແລະ ປະເພດສີຟ້າ ເຊິ່ງເປັນທໍ່ນ້ຳ ຕ້ອງເລືອກໃຊ້ທໍ່ໜາຈຶ່ງມີຄວາມແຂງແກ່ນພໍ. ສຳລັບໂຄງຫຼັງຄາແມ່ນໄດ້ໃຊ້ທໍ່ຍາວ 6 ແມັດທີ່ມີຄວາມຍືດຍຸ່ນ ສະນັ້ນຄວນ ໃຊ້ທໍ່ໄຟຟ້າປະເພດສີເຫຼືອງ.



ສາມາດໃຊ້ທໍ່ຍາວ 6 ແມັດ ຫຼື 3 ແມັດສອງທໍ່ຕໍ່ກັນ ໂດຍໃຊ້ຂໍ້ຕໍ່ຊື່ ແລະ ໃຫ້ປາຍທັງສອງດ້ານຂອງທໍ່ PVC ມາສຸບຕໍ່ກັບເສົາເຫຼັກກົມ ເຮັດໃຫ້ໂຄງຫຼັງຄາເປັນຮູບຊົງໂຄ້ງ ວິທີນີ້ຈະເຮັດໃຫ້ໂຄງຍຶດຕິດຕົວກັນໄດ້ດີ ໂດຍບໍ່ຕ້ອງມີຂໍ້ຕໍ່ ຫຼື ຕິດກາວລະຫວ່າງເຫຼັກ ແລະ ທໍ່ຢາງ (ຖ້າໃສ່ກາວຕໍ່ຂໍ້ຕໍ່ລະຫວ່າງວັດສະດຸປະເພດຕ່າງໆກັນຈະບໍ່ທົນທານ).

## ການປະກອບໂຄງຫຼັງຄາເຂົ້າກັນ



ໃຊ້ທໍ່ PVC ວາງຕາມລວງນອນ ທ່ານສາມາດໃຊ້ທໍ່ໄຟຟ້າສີເຫຼືອງ ຫຼື ທໍ່ນ້ຳສີຟ້າກໍໄດ້ ທໍ່ທີ່ໃຊ້ຕ້ອງເປັນທໍ່ທີ່ໜາຈຶ່ງແຂງແກ່ນ ແລະ ທົນທານ, ແຕ່ຈະມີນ້ຳໜັກ ແລະ ລາຄາແພງກວ່າ. ທໍ່ທີ່ວາງໄປລວງນອນທັງໝົດຈະໃຊ້ 17 ທໍ່ ໂດຍທີ່ໃຊ້ 7 ທໍ່ມັດຕິດຢູ່ເທິງໂຄງຫຼັງຄາ ແລະ ແຕ່ລະຂ້າງ ຂ້າງລະມັດຕິດ 5 ທໍ່, ລວມທັງວາງທໍ່ໄວ້ຕາມພື້ນດິນ ໃນແຕ່ລະດ້ານຂອງເຮືອນອຸໂມງ. ໃຊ້ສາຍເຄເບີໄທມັດເປັນຮູບ X ຢູ່ທຸກໆຈຸດທີ່ທໍ່ PVC ພາດຕັດກັນ.

ໃນຮູບແມ່ນຂະໜາດຂອງໂຄງຫຼັງຄາທີ່ເຮັດແລ້ວ. ເຊິ່ງຢູ່ສົ້ນທໍ່ຂອງທໍ່ PVC ແມ່ນໃຊ້ຂໍຕໍ່ງໍເຮັດໃຫ້ໂຄງຕິດເຂົ້າກັນດີ.

.



## ການເຮັດປະຕູທາງເຂົ້າ

ປະຕູທາງເຂົ້າແມ່ນນຳໃຊ້ເຫຼັກເສັ້ນ ແລະ ທໍ່ PVC ສ້າງໂຄງປະຕູຢູ່ທັງສອງດ້ານຂອງເຮືອນອຸໂມງ ເພື່ອເປັນ ບ່ອນເຂົ້າອອກ. ໃຊ້ເຫຼັກເສັ້ນ 2 ເສັ້ນ ເຮັດທັງສອງດ້ານຂອງຂອບປະຕູ ແລະ ເຊື່ອມຕໍ່ໃສ່ກັບທໍ່ຢູ່ດ້ານຂ້າງ ໂດຍ ໃຊ້ຂໍຕໍ່ 3 ຕາ ແລະ ຂໍຕໍ່ງໍ.







ຂອບປະຕູສາມາດເຮັດດ້ວຍທໍ່ PVC ຫຼື ອາລູມິນຽມ. ເຈົ້າສາມາດໃຊ້ຂອບປະຕູທີ່ສຳເລັດຮູບ ຫຼື ເຮັດດ້ວຍຕົນເອງຈາກແຖບອາລູມິນຽມ. ຫຼັງຈາກເຮັດໂຄງປະຕູແລ້ວ, ໃສ່ຕາໜ່າງກັນແມງໄມ້ ແລະ ປິດໃຫ້ແຈບ.

ວິທີນີ້ຈະເຮັດໃຫ້ມີການລະບາຍອາກາດໄດ້ ແລະ ປ້ອງກັນແມງໄມ້. ຫຼັງຈາກນັ້ນເຮັດບ່ອນຈັບປະຕູ ໂດຍໃຊ້ບັນ ພັບຈັບປະຕູກັບເຫຼັກກົມທີ່ຕິດກັບເຮືອນອຸໂມງ ແລະ ປະຕູຕ້ອງໄດ້ໃສ່ຢ່ວງຈັບ ເພື່ອສະດວກໃນການປິດເປີດປະຕູ. ສ່ວນຕາໜ່າງປະຕູຕ້ອງໄດ້ໃຊ້ຕາໜ່າງຖີ່ ເພື່ອໃຫ້ແມງມີຂາວທີ່ເປັນພາຫະນະນຳເຊື້ອພະຍາດມັນຕົ້ນ ແລະ ສັດຕູພືດທີ່ມີຂະໜາດນ້ອຍຫຼາຍ (<1 ມມ) ບໍ່ສາມາດເຂົ້າໄປໃນໄດ້.







## ການປົກເຮືອນອຸໂມງດ້ວຍຜ້າຢາງ

ແສງແດດເຮັດໃຫ້ຜ້າຢາງທຳມະດາແຫ້ງກອມໄດ້ງ່າຍ ສຳລັບວັດສະດຸທີ່ໃຊ້ປົກເຮືອນອຸໂມງຄວນໃຊ້ຜ້າຢາງທີ່ທົນ ທານຕໍ່ລັງສີ UV, ໃຫ້ໃຊ້ຜ້າຢາງທີ່ອອກແບບມາເພື່ອສ້າງເຮືອນຮົ່ມໂດຍສະເພາະ.

ປົກຜ້າຢາງໃຫ້ທົ່ວໂຄງຫຼັງຄາ, ໃຫ້ສອງຂ້າງຍາວເທົ່າກັນ ແລະ ຖົມຫີນແຮ່ໃສ່ຂອບຂອງຜ້າຢາງທັງສອງດ້ານເພື່ອ ເຮັດໃຫ້ມັນຢ່ອນລົງ.



ຜ້າຢາງເຄັ່ງຕຶງ ເຊິ່ງຈະຊ່ວຍໃຫ້ໂຄງຫຼັງຄາ ແລະ ຜ້າຢາງຫັດເຂົ້າກັນດີ ໂດຍບໍ່ຈຳເປັນຕ້ອງຕັດ ຫຼື ຕິດຢາງຈາກພາຍນອກ (ເຊິ່ງເຮັດໃຫ້ມັນບໍ່ທົນ). ຫຼັງຈາກນັ້ນກວດໃຫ້ແນ່ໃຈວ່າໄດ້ຖົມຫີນແຮ່ອ້ອມຮອບຂອບປະຕູດີແລ້ວບໍ



## ເຮືອນອຸໂມງທີ່ສ້າງສຳເລັດ

ສຳລັບເຮືອນອຸໂມງທີ່ສ້າງສຳເລັດແລ້ວ ນຳເອົາທ່ອນພັນມັນຕົ້ນ ປູກຢູ່ເທິງດິນຊາຍຂອງໂຕະກາງ ເບ້ຍມັນຕົ້ນຈະປະໄວ້ຢູ່ໂຕະທັງສອງຂ້າງໃນເຮືອນອຸໂມງ. ເຮືອນອຸໂມງສາມາດປ້ອງກັນສັດຕູພືດ ແລະ ພະຍາດບໍ່ໃຫ້ເຂົ້າມາ. ເຮືອນອຸໂມງທີ່ສ້າງຂຶ້ນຢ່າງຖືກຕ້ອງສາມາດຢູ່ໄດ້ຫຼາຍປີເຖິງວ່າຢູ່ພາຍໃຕ້ສະພາບອາກາດທີ່ຮ້ອນອົບເອົ້າກໍຕາມ.











## ການຫົດນ້ຳ

ນ້ຳເປັນສິ່ງສຳຄັນສຳລັບການຮັກສາຄວາມຊຸ່ມຂອງດິນຊາຍ, ແລະ ຄວາມຊຸ່ມຊື່ນຂອງອາກາດຢູ່ພາຍໃນເຮືອນອຸໂມງ. ເພື່ອຮັກສາຄວາມຊຸ່ມຊື່ນຄວນໃຊ້ເຄື່ອງພົ່ນນ້ຳ ຫຼື ເຄື່ອງ ຫົດນ້ຳຂະໜາດນ້ອຍ (ບໍ່ແມ່ນເຄື່ອງຢອດນ້ຳ). ການກຽມເຄື່ອງພົ່ນນ້ຳຈະຂຶ້ນກັບທີ່ຕັ້ງ, ການເຂົ້າເຖິງການສະໜອງນ້ຳ, ຄວາມດັນຂອງນ້ຳ, ແລະ ປັດໄຈອື່ນໆ. ສິ່ງສຳຄັນຄືໃຊ້ນ້ຳສະອາດເພື່ອຫຼີກເວັ້ນການປົນເປື້ອນດ້ວຍເຊື້ອແບັກທີເຣຍຫຼືວັດສະພິດ. ຖ້າບໍ່ມີແຫຼ່ງນ້ຳທີ່ສະອາດພຽງພໍ, ອາດຈຳເປັນຕ້ອງນຳໃຊ້ລະບົບສູບນ້ຳ ແລະ ລະບົບກັ່ນຕອງເພື່ອໃຫ້ໄດ້ນ້ຳສະອາດ.

ໂດຍພົບວ່າການຈັດການນ້ຳທີ່ດີຄືລະບົບໃຊ້ຫົວພົ່ນທີ່ມີເຄື່ອງພົ່ນນ້ຳຕິດຢູ່ເທິງໂຕະປູກ ແລະ ໂຕະທາງດ້ານຂ້າງ. ຫົວສີດນ້ຳຖືກຕິດຢູ່ທີ່ຫ່າງກັນ 50 ຊມ. ຫົວສີດມີວາວປິດເປີດທີ່ຕິດຕັ້ງໄວ້ຢູ່ປະຕູທີ່ສາມາດປິດນ້ຳ ຫຼື ເປີດນ້ຳໄດ້.

## ການຈັດການລະບົບນ້ຳ

ເຄື່ອງພົ່ນນ້ຳສາມາດເຮັດວຽກໄດ້ໂດຍອັດຕະໂນມັດ ໂດຍໃຊ້ການຕັ້ງເວລາທີ່ຕັ້ງໂປຣແກມເຊື່ອມຕໍ່ກັບວາວ ຫຼື ປ້ຳ ຫຼື ທ່ານສາມາດເປີດ ແລະ ປິດດ້ວຍຕົນເອງໄດ້. ຮ້ານຂາຍເຄື່ອງກະສິກຳຫຼາຍຮ້ານຂາຍລະບົບຄວບຄຸມເຄື່ອງພົ່ນ ນ້ຳ. ຖ້າຍັງບໍ່ມີລະບົບພົ່ນນ້ຳ ກໍໃຫ້ຫົດນ້ຳດ້ວຍທໍ່ໄປກ່ອນ, ແຕ່ວິທີການນີ້ອາດຈະບໍ່ສາມາດຮັກສາຄວາມຊຸ່ມຊື່ນ ໃນອາກາດໄດ້ຢ່າງມີປະສິດທິພາບ, ສະນັ້ນເຄື່ອງພົ່ນນ້ຳແມ່ນທາງອອກທີ່ດີທີ່ສຸດ.










## ວາງຜັງຂອງເຮືອນອຸໂມງ

### ພື້ນເຮືອນອຸໂມງ ແລະ ແຖວດິນບ່ອກ







## ວາງຜັງຂອງເຮືອນອຸໂມງ
ໂຕະດ້ານຂ້າງ ແລະ ໂຕະປູກ




## ວາງຜັງຂອງເຮືອນອຸໂມງ
## ໂຄງຫຼັງຄາເຮືອນອຸໂມງ







## ວາງຜັງຂອງເຮືອນອຸໂມງ

### ໂຄງຫຼັງຄາເຮືອນອຸໂມງ ແລະ ໂຕະດ້ານຂ້າງ




## ວາງຜັງຂອງເຮືອນອຸໂມງ

### ໂຕະວາງເບ້ຍມັນຕົ້ນດ້ານຂ້າງ










## ວາງຜັງຂອງເຮືອນອຸໂມງ

## ໂຕະປູກ

## ການຈັດການລະບົບເຮືອນອຸໂມງ

ການຈັດການລະບົບເຮືອນອຸໂມງເພື່ອຜະລິດເບ້ຍມັນຕົ້ນແມ່ນຢູ່ໃນຄູ່ມືສະບັບຕໍ່ໄປ ໃນຫົວຂໍ້: "ການຈັດການລະບົບເຮືອນອຸໂມງເພື່ອຂະຫຍາຍທ່ອນພັນມັນຕົ້ນແບບໄວ".

## ແຫຼ່ງຂໍ້ມູນວິດີໂອອື່ນໆ

ບັນດາວິດີໂອມີຫຼາຍພາສາ. ກະລຸນາສະແກນລະຫັດ QR ດ້ວຍສະມາດໂຟນ ຫຼື ແທັບເລັດຂອງທ່ານດ້ວຍກ້ອງ ຫຼື ແອັບເຄື່ອງສະແກນຢູ່ໃນອຸປະກອນທ່ານເພື່ອເບິ່ງວິດີໂອ ແລະ ຊອກຫາຂໍ້ມູນເພີ່ມເຕີມ.

### ຊ່ອງ YouTube ຂອງ CIAT Asia cassava: ສາມາດເຂົ້າເບິ່ງຜ່ານ QR ດ້ານລຸ່ມນີ້ ສຳລັບວິດີໂອຕ່າງໆທີ່ມີຫຼາຍພາສາ